# <u>ລາຍງານການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>
## (ປະຈຳ 6 ເດືອນ ຕົ້ນ ປີ 2016)

## 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບໃນຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດປະຈຳ 6 ເດືອນຕົ້ນປີ 2016 ທຽບກັບ 6 ເດືອນທ້າຍປີ 2015 ທີ່ຜ່ານມາແມ່ນມີລາຍລະອຽດດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ Dow Jones ປັບຕົວເພີ່ມຂຶ້ນ 3.35%, ແລະ S&P500 3.35% ຍົກເວັ້ນ ດັດຊະນີ NASDAQ ປັບຕົວຫຼຸດລົງ -2.52% ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກ ລາຍງານຜູ່ຂໍສະຫວັດດີການວ່າງງານ ຕໍ່າກວ່າທີ່ນັກວິເຄາະຄາດການໄວ້ ແລະ ຕໍ່າກວ່າລະດັບ 300.000 ຄົນ ເປັນອາທິດທີ 51 ເຊິ່ງຖືວ່າຍາວນານທີ່ສຸດນັບຕັ້ງແຕ່ປີ 1970 ແລະ ຄະນະກຳມະການນະໂຍບາຍການເງິນ (FOMC) ຂອງທະນາຄານກາງ ສ.ອາເມລິກາ ປະກາດປັບຂຶ້ນອັດຕາດອກເບ້ຍໄລຍະສັ້ນ 0,25-0,5% ໂດຍຈະມີການປັບຂຶ້ນອັດຕາດອກເບ້ຍ 0,25% ພຽງ 2 ຄັ້ງຈາກກ່ອນໜ້ານີ້ຈະປັບຂຶ້ນ 4 ຄັ້ງໃນ 1 ປີ ແລະ ສະຖາບັນຈັດການດ້ານອຸປະທານຂອງ ສ.ອາເມລິກາ (ISM) ລາຍງານວ່າ ພາກການຜະລິດຂອງ ສ.ອາເມລິກາ ມີການຂະຫຍາຍຕົວຕິດຕໍ່ກັນ 3 ເດືອນ ໃນເດືອນ ພຶດສະພາ ໂດຍດັດຊະນີພາກການຜະລິດໃນເດືອນ ພຶດສະພາ ແມ່ນຢູ່ທີ່ 51,3% ເຊິ່ງເປັນການເພີ່ມຂຶ້ນຈາກລະດັບ 50,8% ໃນເດືອນ ເມສາ ອັນສະແດງໃຫ້ເຫັນເຖິງ ການຟື້ນຕົວຂອງເສດຖະກິດ ສ.ອາເມລິກາ ທີ່ດີຂຶ້ນ ເຊິ່ງສອດຄ່ອງກັບການຖະແຫຼງການຂອງ ທ່ານນາງ ເຈເນັດ ເຢເລັນ ທີ່ກ່າວເຖິງແນວໂນ້ມເສດຖະກິດ ສ.ອາເມລິກາທີ່ແຂງແກ່ງຂຶ້ນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ເອີຣົບ (Eurofirst 300) ປັບຕົວຫຼຸດລົງ -4,69%, ຝຣັ່ງ (CAC40) -4,33% ແລະ ເຢຍລະມັນ (DAX) -4,59% ຍົກເວັ້ນ ຕະຫຼາດຫຼັກຊັບ ລຸກຊໍາບວກ (LUXXX) ທີ່ປັບຕົວເພີ່ມຂຶ້ນ 8,52% ແລະ ອັງກິດ (FTSE100) 3,17%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ປັບຕົວຫຼຸດລົງ ແມ່ນເນື່ອງຈາກ ຜູ່ລົງທຶນຫຼຸດຜ່ອນການເຄື່ອນໄຫວຊື້-ຂາຍພາຍຫຼັງຈາກທີ່ສະຫະພາບເອີຣົບ ຫຼື EU ຄາດວ່າ ຂົງເຂດເອີຣົບ ຈະຂະຫຍາຍຕົວພຽງ 1,6% ໃນປີນີ້ ຫຼຸດລົງ ຈາກທີ່ຄາດການກ່ອນໜ້ານີ້ທີ່ 1,8% ແລະ ການປະກາດການຂາດທຶນຈາກການດຳເນີນທຸລະກິດຂອງບໍລິສັດ ຈົດທະບຽນ ທີ່ມີການການເປີດເຜີຍ ເຊິ່ງເກີດມາຈາກບັນຫາຂອງລາຄານ້ຳມັນໂລກທີ່ປັບຕົວຫຼຸດລົງຢ່າງຕໍ່ເນື່ອງ ປະກອບກັບຄວາມກັງວົນຂອງ ໂລກຕະຫຼາດການເງິນ ຕໍ່ການເຮັດປະຊາມັດຕິຂອງປະຊາຊົນ ອັງກິດຕໍ່ການລົງມັດຕິວ່າ ປະເທດ ອັງກິດຈະຢູ່ ຫຼື ຈະອອກຈາກເອີຣົບ ໃນວັນທີ 23 ມິຖຸນາ 2016 ທີ່ຈະມາເຖິງນີ້ ເຊິ່ງຈະສົ່ງຜົນກະທົບຕໍ່ກັບສະຖຽນລະພາບເສດຖະກິດຂອງກຸ່ມປະເທດໃນເອີຣົບໃນອານາຄົດ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ອາຊຽນ (ASEAN 40) ປັບຕົວເພີ່ມຂຶ້ນ 8,77%, ອິນໂດເນເຊຍ (JCI) 8,64%, ໄທ (SET) 13,15%, ມາເລເຊຍ (FBMLCI) 0,53%, ອົດສະຕາລີ (S&P/ASX200) 3,24%, ສ.ເກົາຫຼີ (KOSPI) 0,07%, ໄຕ້ຫວັນ (TWSE) 4,86%, ຟີລິບປິນ (PCOMP) 12,40%, ສສ. ຫວຽດນາມ (HANOI) 7,34% ແລະ ສສ. ຫວຽດນາມ (HOCHIMIN) 10,78%. ຍົກເວັ້ນ ຕະຫຼາດຫຼັກຊັບ ຍີ່ປຸ່ນ (NIKKEI225) ປັບຕົວຫຼຸດລົງ -14,52%, ກຳປູເຈຍ (CSX) -6,22%, ສປ.ຈີນ (SHENZHEN) -19,86%, ຮ່ອງກົງ (HANG SENG) -5,15%, ສິງກະໂປ (STRAIT TIMES) -1,97% ແລະ ສປ.ຈີນ (SHANGHAI) -20,97%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນແມ່ນເນື່ອງຈາກຂ່າວທີ່ດັດຊະນີຕະຫຼາດຫຼັກຊັບ ສປ ຈີນ ຈະຍັງບໍ່ຖືກລວມເຂົ້າໃນ ດັດຊະນີ MSCI Emerging Market Index ແຕ່ ທະນາຄານກາງ ສປ ຈີນ (PBOC) ກໍ່ໄດ້ປະກາດອັດສີດເມັດເງິນເຂົ້າສູ່ຕະຫຼາດມູນຄ່າ55 ພັນລ້ານຢວນ ແລະ ທັງປະກາດທີ່ຈະປັບວິທີການຄຳນວນອັດຕາສ່ວນການກັນສຳຮອງຂອງ ທະນາຄານທຸລະກິດ (RRR) ໃນຂະນະທີ່ເສດຖະກິດຂອງປະເທດຍັງມີຄວາມບໍ່ແນ່ນອນເທື່ອ ແລະ ທະນາຄານກາງ ຍີ່ປຸ່ນ (BOJ) ກໍ່ໄດ້ປະກາດດຳເນີນມາດຕະການກະຕຸ້ນເສດຖະກິດ ໂດຍການປະກາດຫຼຸດອັດຕາດອກເບ້ຍລົງເຫຼືອ -0,1% ເພື່ອກະຕຸ້ນໃຫ້ທະນາຄານທຸລະກິດນຳເງິນສຳຮອງໄປປ່ອຍກູ້ ແລະ ແກ້ໄຂບັນຫາການແຂງຄ່າຂອງເງິນເຢນທີ່ຍັງຄົງຢູ່ ເຊິ່ງບັນດາທິດທາງດັ່ງກ່າວໄດ້ກາຍເປັນປັດໃຈສະໜັບສະໜູນໃຫ້ແກ່ບັນຍາກາດຕະຫຼາດຫຼັກຊັບໃນອາຊີ ເຖິງແມ່ນວ່າ ພາຍຫຼັງຕະຫຼາດຫຼັກຊັບອາຊີ ຈະໄດ້ຮັບແຮງບີບ ແລະ ກົດດັນຈາກວິກິດການຂອງປະເທດ ອັງກິດ ຫຼື Brexit ເຊິ່ງເປັນການຖ່ວງດຶງບັນຍາກາດຕະຫຼາດການເງິນທົ່ວໂລກກໍ່ຕາມ.

## 2. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນ 6 ເດືອນຕົ້ນປີ ປິດຢູ່ທີ່ 1.127,40 ຈຸດ ຫຼຸດລົງ 4,57% ເມື່ອທຽບໃສ່ 6 ເດືອນທີ່ຜ່ານມາ, ຕະຫຼອດ 6 ເດືອນ ມີປະລິມານຊື້-ຂາຍຮຸ້ນທັງໝົດ 9,83 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 50,78 ຕື້ກີບ ຫຼຸດລົງ 40,90% ທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 57,37% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 4.408 ກີບ ຫຼຸດລົງ 1.312 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 2,76 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 12,19 ຕື້ກີບ ເພີ່ມຂຶ້ນ 27,79% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 41,34% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,31%[1].

ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.863 ກີບ ຫຼຸດລົງ 676 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 6,09 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 35,72 ຕື້ກີບ ຫຼຸດລົງ 51,31% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງ ປະເທດສະເລ່ຍ ກວມເອົາ 50,87% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[2].

ຮຸ້ນຂອງບໍລິສັດລາວເວີນ ມະຫາຊົນ (LWPC) ມີລາຄາຊື້-ຂາຍສະເລ່ຍ 6.579 ກີບ ຫຼຸດລົງ 1.184 ກີບ ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.456 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 9,57 ລ້ານກີບ ຫຼຸດລົງ 96,13% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.750 ກີບ ຫຼຸດລົງ 138 ກີບ, ມີປະລິມານຊື້-ຂາຍທັງໝົດ 667.149 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,83 ຕື້ກີບ ເພີ່ມຂຶ້ນ 3,42% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດສະເລ່ຍ ກວມເອົາ 48.76% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,66%[4]

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາຊື້-ຂາຍສະເລ່ຍ 3.326 ກີບ ເພີ່ມຂຶ້ນ 66 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 309.656 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,02 ຕື້ກີບ ເພີ່ມຂຶ້ນ 2,07% ເມື່ອທຽບໃສ່ 6 ເດືອນ ທີ່ຜ່ານມາ, ໂດຍເປັນການຊື້-ຂາຍຂອງ ຜູ່ລົງທຶນຕ່າງປະເທດ ກວມເອົາ 47,38% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ່ລົງທຶນຕ່າງປະເທດແມ່ນ 4,22%[5].

**ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ**

ທ. ບຸນຈົງ ກອງຄໍາ

---

[1] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[2] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[3] ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ;

[4] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

[5] ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກໍານົດ.

## ຕາຕະລາງ1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

(ເດືອນ ມັງກອນ - ມິຖຸນາ 2016)

| | 6 ເດືອນ ທ້າຍປີ 2015 | | | 6 ເດືອນ ຕົ້ນປີ 2016 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ (ກີບ) | ຈຳນວນ(ຮຸ້ນ) | ມູນຄ່າການຊື້ຂາຍ (ກີບ) | ລາຄາສະເລຍ(ກີບ) | ຈຳນວນ | ມູນຄ່າການຊື້ຂາຍ | ລາຄາສະເລຍ |
| BCEL | 1.667.895 | 9.540.876.600 | 5.720 | 2.765.830 | 12.192.657.300 | 4.408 | 65,83 | 27,79 | -1.312 |
| EDL-GEN | 11.219.629 | 73.360.311.800 | 6.539 | 6.092.606 | 35.721.326.950 | 5.863 | -45,70 | -51,31 | -676 |
| LWPC | 31.896 | 247.597.700 | 7.763 | 1.456 | 9.578.800 | 6.579 | -95,44 | -96,13 | -1.184 |
| PTL | 614.252 | 1.774.289.850 | 2.889 | 667.149 | 1.834.939.200 | 2.750 | 8,61 | 3,42 | -138 |
| SVN | 309.500 | 1.009.050.000 | 3.260 | 309.656 | 1.029.960.400 | 3.326 | 0,05 | 2,07 | 66 |
| ທັງໝົດ | 13.843.172 | 85.932.125.950 | | 9.836.697 | 50.788.462.650 | | -28,94 | -40,90 | |

## ແຜນວາດ1: ດັດຊະນີຕະຫຼາດຫຼັກຊັບລາວ

(ວັນທີ 11 ມັງກອນ - 22 ມິຖຸນາ 2016)




## ແຜນວາດ2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

(ເດືອນ ມັງກອນ - ມິຖຸນາ 2016)



## ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດສະນີ | ປະເທດ | ດັດຊະນີ 6 ເດືອນຕົ້ນປີ 2016 | ດັດຊະນີ 6 ເດືອນທ້າຍປີ 2015 | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 17.829,73 | 17.251,62 | 578,11 | 3,35 |
| NASDAQ | ສ.ອາເມລິກາ | 4.843,76 | 4.968,92 | -125,16 | -2,52 |
| S&P500 | ສ.ອາເມລິກາ | 2.088,90 | 2.021,15 | 67,75 | 3,35 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.336,1 | 1.401,94 | -65,84 | -4,69 |
| DAX | ເຢຍລະມັນ | 10.015,54 | 10.497,77 | -482,23 | -4,59 |
| FTSE100 | ອັງກິດ | 6.226,55 | 6.034,84 | 191,71 | 3,17 |
| CAC40 | ຝຣັ່ງ | 4.367,24 | 4.565,17 | -197,93 | -4,33 |
| LUXXX | ລຸກຊໍາບວກ | 1.461,809 | 1.347,066 | 114,743 | 8,52 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 16.169,11 | 18.916,02 | -2.746,9 | -14,5 |
| KOSPI | ສ.ເກົາຫຼີ | 1.982,70 | 1.981,19 | 1,51 | 0,07 |
| HANGSHENG | ຮ່ອງກົງ | 20.668,44 | 21.791,68 | -1.123,2 | -5,15 |
| TWSE | ໄຕ້ຫວັນ | 8.684.85 | 8.282,17 | 402,68 | 4,86 |
| SHANGHAI | ສປ. ຈີນ | 2.878,56 | 3.642,47 | -763,91 | -20,97 |
| SHENZHEN | ສປ. ຈີນ | 1.889,71 | 2.357,99 | -468,28 | -19,86 |
| S&P/ASX200 | ອົດສະຕາລີ | 5.274,40 | 5.109 | 165,4 | 3,24 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 9.008,63 | 8.281,76 | 726,87 | 8,78 |
| STRAIT TIME | ສິງກະໂປ | 2.789,45 | 2.845,55 | -56,1 | -1,97 |
| SET | ໄທ | 1.430,80 | 1.264,44 | 166,36 | 13,15 |
| FBMLCI | ມາເລເຊຍ | 1.637,69 | 1.629,09 | 8,6 | 0,53 |
| JCI | ອິນໂດເນເຊຍ | 4.878,71 | 4.490,68 | 388,03 | 8,64 |
| PCOMP | ຟີລິບປິນ | 7.767,23 | 6.910,34 | 856,89 | 12,4 |
| HOCHIMIN | ສສ. ຫວຽດນາມ | 628 | 566,9 | 61,1 | 10,78 |
| HANOI | ສສ. ຫວຽດນາມ | 84,5 | 78,72 | 5,78 | 7,34 |
| CSX | ກໍາປູເຈຍ | 371,35 | 396,01 | -24,66 | -6,2 |
| LSX | ສປປ. ລາວ | 1.128,83 | 1.181,3 | -52,47 | -4,44 |
| MYANPIX | ມຽນມ້າ | 872,67 | ຍັງບໍ່ທັນເລີ່ມຊື້-ຂາຍ | 872,67 | #DIV/0! |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 2.770,42 | 2.837,52 | -67,1 | -2,36 |
| SET BANK | ໄທ | 456,02 | 424,6 | 31,42 | 7,4 |